# ຮັກນ້ອງຕລອດໄປ

ໂດຍ: ບ່າວຫູ້ກເຈັດ

ບໍ່ຢາກຄິດລ່ວງຫນ້າ    ມັນພັດແມ່ນຄວາມຈິງ
ຍິງທີ່ເຮົາເຄີຍຝັນ    ຈະພາກັນ  July ນີ້
ສາວຄົນດີຂອງອ້າຍ    ເຂົາຊິມີຊູ້ໃຫມ່
ເດືອນ  July    ອ້າຍຄົງຮ້ອງຮ່ຳໄຫ້   ເຫັນແຟນອ້າຍຜູ້ອື່ນຄອງ  ອຸກໃຈເດເອີຍ!

ອ້າຍບໍ່ຕຳນິນ້ອງ    ທີ່ມີຮັກສອງຄົນ
ນ້ອງຄົງສາຣະວົນໃຈ    ຮັກນ້ອງກາຍເປັນສາມເສົ້າ
ແມ່ນມີເຂົາຊິ້ງໃຈຊ້ອນ    ຍັງອາວັນນຳຊູ້ເກົ່າ   ບໍ່ນໍ
ອ້າຍຄົນຈົນ  ຄົງພົບຄວາມໂສກເສົ້າ   ເຂົາເອົານ້ອງໄປຢູ່ຊົມ....

ເພິ່ນວ່າ   ສວັນມີແຕ່ຍັງຫຼົ້ມ    ມັນຂົມຂື່ນທໍຣະມານ  ແທ້ເດ
ຝັນກຳລັງຈະມືນມາຍ    ຄວາມຮັກກາຍເປັນຄວາມຮ້າງ
ໃຫ້ນ້ອງວາງໃຈໄດ້    ອ້າຍບໍ່ໄປຂວາງທາງດອກ
ບອກອ່ວຍພອນໃຫ້ນ້ອງ    ຄອງສຸກລົ້ນ  ໄດ້ຮັກຈິງ  ແດ່ທ້ອນ

ຍິງໃນຝັນຂອງອ້າຍ    ຊິໄລລອດລາຫນີ   ແລ້ວບໍ
ຮູ້ຂ່າວກັນບໍ່ພໍປີ    ນ້ອງຊິຫນີໄກຈ້ອຍ
ມັນຊ່າງເຕັມທີຂ້ອຍ    ເດືອນ  July  ຊິໄດ້ປ່ອຍ   ໃຫ້ເຂົາແລ້ວ
ເກີດມາ   ວາສນາຊ່າງຕ່ຳຕ້ອຍ   ຄອຍເປັນຊູ້ຜູ້ອື່ນຊູ    ເຕັມທີແລ້ວ

ຂໍອ່ວຍພອນໃຫ້ຍອດຊູ້    ໃຫ້ນ້ອງຢູ່ມີສຸຂ   ກັບເຂົາເດີ
ອ້າຍຍອມທໍຣະມານທຸກ    ເພື່ອນ້ອງສຸຂເມືອຫນ້າ

ບຸນສ້າງມາ ພຽງນີ້          ຂໍຢ່າມີ  ຄວາມເຫຼືອງຫຼ່າ
ຂໍໃຫ້ພົບກັນຊາຕໜ້າ          ຊິລໍຖ້າຢູ່ສວັນ  ຖ້າມີຈິງ

ສ່ວນວ່າຊາຕນີ້ນັ້ນ          ຄົງໄດ້ຮ່ວມແຕ່ທາງໃຈ
ສ່ວນກາຍາເປັນຂອງເຂົາ          ແຕ່ຮັກເຮົາເປັນຄົນໄດ້
ເຫຼືອໃຈເຂົາບຸນບໍ່ສ້າງ          ກະຖິນແຮເຂົາພັດໄດ້ເຊີ້ງແຫ່
ອ້າຍຜູ້ສ້າງມາແຫ້ງ          ພໍພຽງໄດ້ແຕ່ລໍ່າດູ ແຫ້ນໍ

ອ້າຍຢາກບອກໃຫ້ຮູ້          ອ້າຍຫວັງຢູ່ຄຽງໜມອນ  ແທ້ໃດ໋
ດວງສມອນຢູ່ໃນໃຈ          ຮອດມື້ຕາຍບໍ່ມາຍມ້າງ
ຈົນເຖິງດິນປົກໜ້າ          ຫຼືກາຍຍາເປັນເຖົ່າຖ່ານ
ຄວາມຮັກຍັງຢູ່ໜັ້ນ          ບໍ່ມີມື້ຊິຈືດຈາງ  ດອກເດີ

ອ້າຍບໍ່ຂໍ ເປັນກ້າງ          ຂວາງທາງລ່ອງຄໍຫອຍ
ຈະຄອຍເປັນກໍາລັງໃຈ          ຕລອດໄປເລີ້ງເລື້ອຍ
ຄືເຄືອເຟືອຍທາວສົ້ນ          ສົນລະວົນໄປຕລອດ
ຮອດມື້ດູກອ້າຍເຂົ້າໜໍ້          ຍໍນາງໄວ້ຢູ່ຫວ່າງໃຈ ແທ້ໃດ

ອ້າຍຮູ້  ວ່ານ້ອງກໍຮັກອ້າຍ          ບໍ່ມີສິ່ງປຸນປານ
ແຕ່ວ່າສັງຂານເຮົາ          ຢ້ານເກົ່າສິເມືອໜ້າ
ການໃຫ້ນາງຄອຍຖ້າ          ເສັຽເວລາຢ້ານດາຍເປົ່າ
ຄວາມຮັກເຮົາ ຄົງມີຮົ້ວກີດຂັ້ນ          ກໍາແພງກັ້ນຮີດຄອງ ຊັ້ນບໍ